Ascension Saint Thomas
Rehabilitation Hospital

# ໂຮງໝໍຟື້ນຟູສະມັດຕະພາບ ASCENSION SAINT THOMAS

## ສັງລວມນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ

ໂຮງໝໍຟື້ນຟູສະມັດຕະພາບ Ascension Saint Thomas ("ອົງກອນ") ມີຄວາມມຸ່ງໝັ້ນທີ່ຈະໃຫ້ຄວາມເຄົາລົບ ແລະ ນັບຖືກຽດສັກສີຂອງແຕ່ລະຄົນດ້ວຍຄວາມເປັນຫ່ວງເປັນພິເສດສຳລັບຜູ້ທີ່ຕໍ່ສູ້ກັບອຸປະສັກໃນການເຂົ້າເຖິງການບໍລິກາ ນ ດ້ານສຸຂະພາບ. ໂຮງໝໍຟື້ນຟູສະມັດຕະພາບ Ascension Saint Thomas ມີຄວາມມຸ່ງໝັ້ນໃຫ້ຄວາມເທົ່າທຽມກັນ ໃນການຄຸ້ມຄອງຊັບພະຍາກອນດ້ານສຸຂະພາບຂອງຕົນເປັນການບໍລິການໃຫ້ແກ່ຊຸມຊົນທັງໝົດ. ເພື່ອເປັນການສົ່ງເສີມ ຫຼັກການເຫຼົ່ານີ້, ໂຮງໝໍຟື້ນຟູສະມັດຕະພາບ Ascension Saint Thomas ຍັງໃຫ້ການຊ່ວຍເຫຼືອທາງດ້ານການເງິນ ສຳລັບບຸກຄົນບາງຄົນທີ່ໄດ້ຮັບການດູແລສຸກເສີນ ຫຼື ການປິ່ນປົວທາງການແພດທີ່ຈຳເປັນອື່ນໆຈາກໂຮງໝໍຟື້ນຟູສະມັດ ຕະພາບ Ascension Saint Thomas. ບົດສະຫຼຸບນີ້ໃຫ້ພາບລວມສັ້ນໆຂອງນະໂຍບາຍການຊ່ວຍເຫຼືອທາງດ້ານ ການເງິນຂອງໂຮງໝໍຟື້ນຟູສະມັດຕະພາບ Ascension Saint Thomas.

### ໃຜມີສິດໄດ້ຮັບ?

ໂດຍທົ່ວໄປແລ້ວ ການຊ່ວຍເຫຼືອທາງດ້ານການເງິນແມ່ນໄດ້ກຳນົດໂດຍລາຍຮັບຄົວເຮືອນທັງໝົດຂອງທ່ານ ເມື່ອທຽບກັບ ລະດັບຄວາມທຸກຍາກຂອງລັດຖະບານກາງ. ຖ້າລາຍຮັບຂອງທ່ານໜ້ອຍກວ່າ ຫຼື ເທົ່າກັບ 250% ຂອງລະດັບຄວາມ ທຸກຍາກຂອງລັດຖະບານກາງ, ທ່ານອາດຈະໄດ້ຮັບເງິນຊົດເຊີຍການດູແລການກຸສົນ 100% ໃນສ່ວນຂອງຄ່າບໍລິການ ທີ່ທ່ານຮັບຜິດຊອບ. ຖ້າລາຍຮັບຂອງທ່ານສູງກວ່າ 250% ຂອງລະດັບຄວາມທຸກຍາກຂອງລັດຖະບານກາງ ແຕ່ບໍ່ເກີນ 400% ຂອງລະດັບຄວາມທຸກຍາກຂອງລັດຖະບານກາງ, ທ່ານອາດຈະໄດ້ຮັບສ່ວນຫຼຸດໃນລະດັບທີ່ເລື່ອນໄດ້.
ຖ້າທ່ານມີໜີ້ສິນທາງການແພດສຳລັບການດູແລສຸກເສີນ ແລະ
ການປິ່ນປົວທາງການແພດທີ່ຈຳເປັນທີ່ເກີນຈຳນວນລາຍໄດ້ ຂອງທ່ານ, ທ່ານອາດຈະມີສິດໄດ້ຮັບສ່ວນຫຼຸດ.
ຖ້າທ່ານມີຊັບສິນເກີນ 250% ຂອງລາຍຮັບລະດັບຄວາມທຸກຍາກຂອງ ລັດຖະບານກາງ
ທ່ານອາດບໍ່ມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອທາງດ້ານການເງິນ. ທ່ານອາດຈະຕ້ອງຊຳລະຄ່າບໍລິການເລັກ ນ້ອຍ.
ຄົນເຈັບທີ່ມີສິດໄດ້ຮັບການຊ່ວຍເຫຼືອດ້ານການເງິນຈະບໍ່ຖືກຄິດຄ່າທຳນຽມເພີ່ມເຕີມສຳລັບການດູແລທີ່ມີສິດ ໄດ້ຮັບຫຼາຍກ່ວາຈຳນວນທີ່ຮຽກເກັບໂດຍທົ່ວໄປໃຫ້ແກ່ຄົນເຈັບທີ່ມີການປະກັນໄພ.

### ການບໍລິການໃດແດ່ໄດ້ຮັບການຄຸ້ມຄອງ?

ນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນໄດ້ນຳໃຊ້ກັບການເບິ່ງແຍງດູແລສຸກເສີນ ແລະ
ການປິ່ນປົວທາງການແພດ ທີ່ຈຳເປັນອື່ນໆ.
ຂໍ້ກຳນົດເຫຼົ່ານີ້ແມ່ນໄດ້ກຳນົດໄວ້ໃນນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ. ການດູແລອື່ນໆ
ທັງໝົດບໍ່ໄດ້ຖືກຄຸ້ມຄອງໂດຍນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ.

### ຂ້າພະເຈົ້າສາມາດສະໝັກຂໍໄດ້ແນວໃດ?

ເພື່ອສະຫມັກຂໍການຊ່ວຍເຫຼືອທາງດ້ານການເງິນ, ປົກກະຕິທ່ານ ຈະຕ້ອງຂຽນໃບຄຳຮ້ອງສະໝັກຂໍເປັນລາຍລັກ ອັກສອນ ແລະ ປະກອບເອກະສານສະໜັບສະໜູນໃຫ້ຕາມທີ່ລະບຸໄວ້ໃນນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ ແລະ ຄຳຮ້ອງສະໝັກ ການຊ່ວຍເຫຼືອທາງດ້ານການເງິນ.

ຄຳຮ້ອງສະໝັກນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ ແລະ ຄຳແນະນຳຄຳຮ້ອງສະໝັກນະໂຍບາຍການຊ່ວຍ ເຫຼືອທາງດ້ານການເງິນຈະສາມາດໃຊ້ໄດ້ຕາມຄຳຮ້ອງຂໍຂອງຄົນເຈັບໃນເວລາທີ່ໃຫ້ບໍລິການ.

ຖ້າຄົນເຈັບຕ້ອງການຂໍຄວາມຊ່ວຍເຫຼືອທາງດ້ານການເງິນຫຼັງຈາກມື້ໃຫ້ບໍລິການ, ຄົນເຈັບສາມາດເຂົ້າເຖິງຄໍາຮ້ອງສະໝັກນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ ແລະ ຄໍາແນະນໍາຄໍາຮ້ອງສະໝັກນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ ແລະ ພິມໂດຍກົງຈາກເວັບໄຊທ໌ຂອງໂຮງໝໍຟື້ນຟູສະມັດຕະພາບ Ascension Saint Thomas.

ນອກຈາກນີ້ ຄົນເຈັບອາດຈະຮ້ອງຂໍເອົາສໍາເນົາຂອງຄໍາຮ້ອງສະໝັກນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ ແລະ ຄໍາແນະນໍາຄໍາຮ້ອງສະໝັກໂຍບາຍການຊ່ວຍເຫຼືອທາງດ້ານການເງິນທາງໄປສະນີ.
ເພື່ອຮ້ອງຂໍສໍາເນົາເອກະສານ ທາງໄປສະນີ, ຄົນເຈັບຄວນໂທຫາອົງກອນຂອງໂຮງໝໍໄດ້ທີ່ເບີໂທ 629-253-5300.

## <u>ຂ້າພະເຈົ້າສາມາດຂໍການຊ່ວຍເຫລືອໃນຄໍາຮ້ອງສະໝັກ ໄດ້ແນວໃດ?</u>

ສໍາລັບການຊ່ວຍເຫຼືອໃນຄໍາຮ້ອງສະໝັກນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ, ທ່ານສາມາດຕິດຕໍ່ອົງກອນໄດ້ທີ່ເບີໂທ 629-253-5300. ນອກຈາກນີ້ ຍັງມີການຊ່ວຍເຫຼືອເພີ່ມເຕີມຢູ່ຕາມການຮ້ອງຂໍໃນພື້ນທີ່ຮັບສະໝັກໃດໜຶ່ງ.

## <u>ຂ້າພະເຈົ້າສາມາດຂໍຂໍ້ມູນເພີ່ມເຕີມແນວໃດ?</u>

ສໍາເນົາຂອງຄໍາຮ້ອງສະໝັກນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ ແລະ ນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນແມ່ນມີຢູ່ທີ່ www.ascensionrehabhospital.com. ສາມາດຮັບສໍາເນົານະໂຍບາຍການຊ່ວຍເຫຼືອທາງດ້ານ ການເງິນ ແລະ ຄໍາຮ້ອງສະໝັກນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນຍັງທາງໄປສະນີໂດຍໂທຫາອົງກອນທີ່ເບີໂທ 629-253-5300. ຂໍ້ມູນເພີ່ມເຕີມກ່ຽວກັບນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນແມ່ນສາມາດຮ້ອງຂໍໄດ້ ເຊັ່ນກັນ.

## <u>ຈະເປັນແນວໃດຖ້າຫາກວ່າຂ້າພະເຈົ້າບໍ່ມີສິດໄດ້ຮັບ?</u>

ຖ້າຫາກວ່າທ່ານບໍ່ມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອທາງດ້ານການເງິນພາຍໃຕ້
ນະໂຍບາຍການຊ່ວຍເຫຼືອທາງດ້ານ ການເງິນ, ທ່ານອາດຈະມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອປະເພດອື່ນ.
ສໍາລັບຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່ທາງ ໂທລະສັບທີ່ເບີໂທ 629-253-5300.

**ການແປຄໍາອະທິບາຍກ່ຽວກັບນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ, ຄໍາຮ້ອງສະໝັກ ແລະ ຄໍາແນະນໍານະໂຍບາຍ ທາງດ້ານການເງິນ ແລະ ບົດສະຫລຸບພາສາທໍາມະດານີ້ມີເປັນພາສາຕໍ່ໄປນີ້ໃນເວບໄຊທ໌ຂອງພວກເຮົາ ແລະ ຕາມການ ຮ້ອງຂໍ:**

ພາສາອັງກິດ, ພາສາສະເປນ, ພາສາຈີນກາງ, ພາສາຈີນດັ້ງເດີມ, ພາສາຫວຽດນາມ, ພາສາລາວ ແລະ ພາສາອາຣັບ, ພາສາເກົາຫຼີ.